ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການຕ່າງປະເທດ
ກົມກົງສຸນ

**<u>ຄໍາຮ້ອງຂໍໜັງສືຜ່ານແດນຫົວໃໝ່</u>** ☐ **<u>ຄໍາຮ້ອງຂໍປ່ຽນໜັງສືຜ່ານແດນ</u>** ☐

| |
|---|
| ຕິດຮູບຖ່າຍສີ<br>ຂະໜາດ 4x6 ຊມ<br>ພື້ນສີຂາວ ແລະ<br>ປະທັບກາມາຍບ້ານ |

**ຊື່ ທ້າວ/ນາງ:** . . . . . . . . . . . . . . . . . . . . . . **ນາມສະກຸນ:** . . . . . . . . . . . . . . .

Prenom/Name: . . . . . . . . . . . . . . . . . . . . . . Nom/Surname: . . . . . . . . . . . . . . .

ຊື່ເດີມ: . . . . . . . . . . . . . . . . . . . . . . . . ນາມສະກຸນເດີມ: . . . . . . . . . . . . . . .

ວັນ ເດືອນ ປີ ເກີດ: _ _ / _ _ / _ _ _ _ ບ້ານເກີດ: . . . . . . . . . . . . . . . . . . . .

ເມືອງ: . . . . . . . . . . . . . . . . . . **ແຂວງ:** . . . . . . . . . . . . . . ປະເທດ: . . . . . . . . .

ເຊື້ອຊາດ: . . . . . . . . . . . . . . . . . ສາສະໜາ: . . . . . . . . . . . . . . ລວງສູງ: . . . . . . . .

ທີ່ຢູ່ປະຈຸບັນ ບ້ານ: . . . . . . . . . . . . . ໜ່ວຍ: . . . . . . . . . . ເຮືອນເລກທີ: . . . . . . . .

ເມືອງ: . . . . . . . . . . . . . . . ແຂວງ: . . . . . . . . . . . . . . . . . ໂທລະສັບ: . . . . . . . . .

ອາຊີບ: . . . . . . . . . . . . . . ບ່ອນເຮັດວຽກ: . . . . . . . . . . . . . . . . . . . . . . . . . . .

ສໍາມະໂນຄົວເລກທີ: . . . . . . . . . . ລົງວັນທີ: _ _ / _ _ / _ _ _ _ ອອກຊື່: . . . . . . . . . . . . . . . . . . . .

ຊື່ພໍ່: . . . . . . . . . . . . . . . . . . . . . ນາມສະກຸນ: . . . . . . . . . . . . . . . . . . . . ອາຍຸ: . . . . ໂທລະສັບ: . . . . . . . . .

ຊື່ແມ່: . . . . . . . . . . . . . . . . . . . . ນາມສະກຸນ: . . . . . . . . . . . . . . . . . . . . ອາຍຸ: . . . . ໂທລະສັບ: . . . . . . . . .

ບ້ານຢູ່ປະຈຸບັນຂອງພໍ່/ແມ່: . . . . . . . . . . . . ເມືອງ: . . . . . . . . . . . . . ແຂວງ: . . . . . . . . . . . . ປະເທດ: . . . . . . . .

ສະຖານະພາບຄອບຄົວ: ☐ ໂສດ, ☐ ແຕ່ງງານແລ້ວ, ຊື່ ຜົວ/ເມຍ: . . . . . . . . . . . . . . . . . . ນາມສະກຸນ: . . . . . . . . . . . .

**ກໍລະນີສຸກເສີນ ຕິດຕໍ່ຫາ:** ຊື່ ແລະ ນາມສະກຸນ: . . . . . . . . . . . . . . . . . . . . . . . . . . ບັດປະຈໍາຕົວເລກທີ: . . . . . . . . . . . .

ສາຍພົວພັນ: . . . . . . . . . . . . . . . . . . ໂທລະສັບ: . . . . . . . . . . . . . . ຢູ່ບ້ານ: . . . . . . . . . . . . . . . . . . . . . . . . .

ເມືອງ: . . . . . . . . . . . . . . . . . . . . . . . . . . . . . . . . . ແຂວງ: . . . . . . . . . . . . . . . . . . . . . . . . . . . . . . . . .

**ເລກທີໜັງສືຜ່ານແດນເຫລັ້ມເກົ່າ (ຖ້າມີ):** . . . . . . . . . . . ລົງວັນທີ _ _ / _ _ / _ _ _ _ ໝົດອາຍຸວັນທີ _ _ / _ _ / _ _ _ _

ຂ້າພະເຈົ້າ ຂໍປະຕິຍານວ່າ ທຸກຂໍ້ຄວາມທີ່ຂຽນມາຂ້າງເທິງນີ້ ລ້ວນແຕ່ເປັນຂໍ້ມູນຄວາມຈິງທຸກປະການ ແລະ ຖ້າຫາກມີການບິດເບືອນ ຈະຮັບຜິດຊອບຕາມກົດໝາຍແຫ່ງ ສປປ ລາວ.

ເອກະສານເລກທີ: . . . . . . . . . . / ວັນທີ: _ _ / _ _ / _ _ _ _

ຂ້າພະເຈົ້າຂໍຢັ້ງຢືນວ່າຜູ້ກ່ຽວແມ່ນຄົນສັນຊາດລາວ ແລະ ຢູ່ໃນການຄຸ້ມຄອງຂອງບ້ານເຮົາແທ້

**ລາຍເຊັນ ແລະ ປະທັບກາຂອງນາຍບ້ານ**

| |
|---|
| ກະລຸນາສໍາເນົາບັດປະຈໍາຕົວ ຕິດໃສ່ນີ້ດ້ວຍ |

**ລາຍເຊັນຜູ້ຮ້ອງຂໍ**

**ໝາຍເຫດ:** ກະລຸນາອ່ານຄໍາແນະນໍາ ແລະ ລາຍລະອຽດເອກະສານຕ່າງໆຄັດຕິດມາພ້ອມນີ້ ຢູ່ໜ້າຕໍ່ໄປ

(ໃບຄໍາຮ້ອງສະບັບນີ້ບໍ່ໄດ້ ຊື້-ຂາຍ)

# ເອກະສານຄັດຕິດການຂໍໜັງສືຜ່ານແດນ

- **ຂໍເຮັດໜັງສືຜ່ານແດນຫົວໃໝ່**
  1. ສຳເນົາປື້ມສຳມະໂນຄົວ ຈຳນວນ 01 ຊຸດ;
  2. ຕ້ອງຖືບັດປະຈຳຕົວ ແລະ ປື້ມສຳມະໂນຄົວສະບັບແທ້ ມາພ້ອມ (ໃນປື້ມດັ່ງກ່າວຕ້ອງມີຮູບຜູ້ກ່ຽວ ພ້ອມກາປະທັບຂອງ ປກສ ເມືອງ);
  3. ສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ຕ້ອງມີໃບອະນຸຍາດຜູ້ປົກຄອງ ໂດຍເຊັນຜ່ານອຳນາດການປົກຄອງບ້ານ ຈຳນວນ 01 ໃບ.
- **ຂໍປ່ຽນໜັງສືຜ່ານແດນ**
  1. ໜັງສືຜ່ານແດນເຫຼັ້ມເກົ່າ ພ້ອມສຳເນົາໜ້າຂໍ້ມູນທີ່ມີຮູບຂອງໜັງສືຜ່ານແດນເຫຼັ້ມເກົ່າ ຈຳນວນ 01 ໃບ;
  2. ສຳເນົາປື້ມສຳມະໂນຄົວ ຈຳນວນ 01 ຊຸດ;
  3. ຕ້ອງຖືບັດປະຈຳຕົວ ແລະ ປື້ມສຳມະໂນຄົວແທ້ມາພ້ອມ (ໃນປື້ມດັ່ງກ່າວຕ້ອງມີຮູບຜູ້ກ່ຽວ ພ້ອມກາປະທັບຂອງ ປກສ ເມືອງ)
  4. ໃບອະນຸຍາດຜູ້ປົກຄອງ (ສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ) ໂດຍເຊັນຜ່ານອຳນາດການປົກຄອງບ້ານ ຈຳນວນ 01 ໃບ.

## ຄຳແນະນຳ

1. ຂຽນຄຳຮ້ອງຂໍໜັງສືຜ່ານແດນຕາມໃບຄຳຮ້ອງ ເຊິ່ງສາມາດດາວໂລດໄດ້ຈາກເວັບໄຊຂອງກະຊວງການຕ່າງປະເທດ ຕາມທີ່ຢູ່ນີ້ mofa.gov.la ຫຼື consularlao.gov.la/files/Passport-Ordinary.pdf
2. **ໃບຄຳຮ້ອງຂໍໜັງສືຜ່ານແດນຕ້ອງຕິດຮູບສີ (ພື້ນສີຂາວ) ຂະໜາດ 4X6 ຊມ ພ້ອມທັງກາປະທັບນາຍບ້ານ. ໜັງສືຜ່ານແດນທີ່ໄດ້ອອກໃຫ້ແຕ່ປີ 2018 ເປັນຕົ້ນມາ ທີ່ບໍ່ມີການປ່ຽນແປງຂໍ້ມູນແມ່ນບໍ່ຕ້ອງເຊັນອຳນາດການປົກຄອງບ້ານໃສ່ໃບຄຳຮ້ອງຂໍປ່ຽນໜັງສືຜ່ານແດນ. ສຳລັບໜັງສືຜ່ານແດນທີ່ໄດ້ອອກໃຫ້ກ່ອນປີ 2018 ແລະ ບຸກຄົນທີ່ມີການປ່ຽນແປງຂໍ້ມູນບຸກຄົນ ເຊັ່ນ: ຊື່, ນາມສະກຸນ, ທີ່ຢູ່, ສຳມະໂນຄົວ ຫຼື ອື່ນໆ ແມ່ນຈະຕ້ອງໄດ້ເຊັນອຳນາດການປົກຄອງບ້ານໃສ່ໃບຄຳຮ້ອງຂໍປ່ຽນໜັງສືຜ່ານແດນ; (ປັງປຸງໃໝ່)**
3. **ບຸກຄົນທີ່ສະເໜີຂໍໜັງສືຜ່ານແດນ ຕ້ອງໄດ້ມາຍື່ນເອກະສານດ້ວຍຕົນເອງ ເພື່ອຖ່າຍຮູບ, ເກັບລາຍນິ້ວມື ແລະ ລົງລາຍເຊັນ (ການແຕ່ງກາຍສຸພາບ ແລະ ບໍ່ໃຫ້ໃສ່ເສື້ອສີຂາວ); (ປັບປຸງໃໝ່)**
4. **ບຸກຄົນທີ່ສະເໜີຂໍໜັງສືຜ່ານແດນ ທີ່ມີອາຍຸຕ່ຳກວ່າ 18 ປີ ກໍລະນີ ພໍ່ ແລະ ແມ່ ບໍ່ໄດ້ຢູ່ໃນສຳມະໂນຄົວເຫຼັ້ມດຽວກັນ ຕ້ອງມີໜັງສືຢັ້ງຢືນການເກີດຈາກພາກສ່ວນກ່ຽວຂ້ອງ ແລະ ໃບແຕ່ງດອງ ຫຼື ບຶດບັນທຶກການສູ່ຂໍຂອງພໍ່ແມ່ ສະບັບແທ້ ແລະ ສຳເນົາ ຈຳນວນ 01 ຊຸດ. ກໍລະນີ ພໍ່ ແລະ ແມ່ ໄດ້ຢ່າຮ້າງກັນ ຕ້ອງມີໃບຢັ້ງຢືນການຢ່າຮ້າງຈາກພາກສ່ວນກ່ຽວຂ້ອງ ແລະ ກໍລະນີ ພໍ່ ຫຼື ແມ່ ເສຍຊີວິດ ຕ້ອງມີໃບຢັ້ງຢືນການເສຍຊີວິດຈາກພາກສ່ວນກ່ຽວຂ້ອງ; (ປັບປຸງໃໝ່)**
5. ສຳລັບຜູ້ທີ່ມີອາຍຸຕ່ຳກວ່າ 18 ປີ ຕ້ອງມີຜູ້ປົກຄອງພາມາຍື່ນເອກະສານຂໍໜັງສືຜ່ານແດນ;
6. ບຸກຄົນທີ່ເຮັດໜັງສືຜ່ານແດນເສຍ ຕ້ອງມີໃບແຈ້ງເສຍຫາຍຈາກເຈົ້າໜ້າທີ່ ປກສ ຂັ້ນເມືອງ ຫຼື ແຂວງ ຫຼື ນະຄອນຫຼວງ;
7. **ບຸກຄົນທີ່ມີໜັງສືຜ່ານແດນແລ້ວ ຖ້າຕ້ອງການປ່ຽນຊື່ ຫຼື ນາມສະກຸນ ຫຼື ຕື່ມນາມສະກຸນ ຕ້ອງມີໃບອະນຸຍາດຈາກພາກສ່ວນກ່ຽວຂ້ອງ ສະບັບແທ້ ແລະ ສຳເນົາ ພ້ອມທັງແປເປັນພາສາອັງກິດທີ່ໄດ້ຢັ້ງຢືນຜ່ານກົມທະບຽນສານ ກະຊວງຍຸຕິທຳ ແລະ ກົມກົງສຸນ ກະຊວງການຕ່າງປະເທດ ເພື່ອເກັບຮັກສາໄວ້ ແລະ ນຳໃຊ້ຢັ້ງຢືນຄວາມຖືກຕ້ອງໃນເວລາເດີນທາງໄປຕ່າງປະເທດ; (ປັບປຸງໃໝ່)**
8. ບຸກຄົນທີ່ມີພໍ່ ຫຼື ແມ່ ເປັນຄົນຕ່າງປະເທດ ຕ້ອງມີໃບແຕ່ງດອງຂອງພໍ່ແມ່ ສະບັບແທ້ ແລະ ສຳເນົາ ຈຳນວນ 01 ຊຸດ. ຖ້າແຕ່ງດອງຢູ່ຕ່າງປະເທດ ໃບແຕ່ງດອງດັ່ງກ່າວຕ້ອງຜ່ານການຢັ້ງຢືນຈາກສະຖານເອກອັກຄະລັດຖະທູດ ຫຼື ກົງສຸນໃຫຍ່ ແຫ່ງ ສປປ ລາວ ປະຈຳຢູ່ ຫຼື ຮັບຜິດຊອບປະເທດນັ້ນ;
9. **ບຸກຄົນທີ່ມາຂໍປ່ຽນໜັງສືຜ່ານແດນ ກໍລະນີ ອາໄສຢູ່ຕ່າງປະເທດ ຕ້ອງມີໃບນຳສົ່ງຂອງສະຖານທູດລາວ ປະຈຳຢູ່ປະເທດທີ່ຕົນອາໄສຢູ່ ພ້ອມທັງເອກະສານຄັດຕິດຕາມແຕ່ລະກໍລະນີເຊັ່ນ: ບັດພັກເຊົາ, ບັດກົງສຸນ, ບັດອອກແຮງງານ, ໃບແຕ່ງງານ, ບັດນັກສຶກສາ ແລະ ອື່ນໆ; (ປັບປຸງໃໝ່)**
10. ບຸກຄົນທີ່ສະກົດຊື່ ແລະ ນາມສະກຸນ ພາສາຕ່າງປະເທດ ທີ່ຂັດກັບຫຼັກຂອງວິຊາການ (ສະກົດແບບພາສາຝຣັ່ງ ຕົວຢ່າງ: Mr. Seng ແຕ່ສະກົດ Mr. Saeng ຫຼື Mr. Phothisay ແຕ່ສະກົດ Mr. Bodhisay) ຕ້ອງຖືເອກະສານທີ່ທາງການເຄີຍອອກໃຫ້ ເຊັ່ນ: ໃບປະກາດ ແລະ ເອກະສານທາງການອື່ນໆ ສະບັບແທ້ ແລະ ສຳເນົາ ຈຳນວນ 01 ຊຸດ ມາພ້ອມ ເພື່ອຢັ້ງຢືນຕໍ່ເຈົ້າໜ້າທີ່ກ່ຽວຂ້ອງຂອງກົມກົງສຸນ;
11. ຄົນຕ່າງດ້າວທີ່ໄດ້ສັນຊາດລາວ ຕ້ອງຖືເອກະສານການໄດ້ຮັບສັນຊາດລາວທີ່ຖືກຕ້ອງຈາກພາກສ່ວນກ່ຽວຂ້ອງ ສະບັບແທ້ ແລະ ສຳເນົາ ຈຳນວນ 01 ຊຸດ;
12. ສຳລັບພະສົງ, ສຳມະເນນ ແລະ ແມ່ຂາວ ຕ້ອງມີໜັງສືສະເໜີຈາກອົງການພຸດທະສາສະໜາຂອງແຂວງ ຫຼື ກົມສາສະໜາຂອງສູນກາງແນວລາວສ້າງຊາດ, ຕ້ອງຖືປື້ມສຸດທິ ແລະ ສຳມະໂນຄົວສົງ ສະບັບແທ້ ແລະ ສຳເນົາ ຈຳນວນ 01 ຊຸດ;
13. ນອກຈາກເອກະສານທີ່ກ່າວມາຂ້າງເທິງນີ້ ເຈົ້າໜ້າທີ່ອາດຈະຂໍເອກະສານອື່ນໆທີ່ກ່ຽວຂ້ອງເພີ່ມເຕີມ ເພື່ອປະກອບໃສ່ໃບຄຳຮ້ອງຂໍໜັງສືຜ່ານແດນ ຕາມແຕ່ລະກໍລະນີ.